ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0567/25 /ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 06 ພະຈິກ 2025

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 6/2025, ທີ່ຈັດຂຶ້ນໃນ ວັນທີ 06 ພະຈິກ 2025

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 6/2025, ທີ່ຈັດຂຶ້ນໃນວັນທີ 06 ພະຈິກ 2025 ເຊິ່ງມີວາລະຮັບຮອງເອົາມະຕິທີ່ສຳຄັນ ດັ່ງນີ້:

1. ອະນຸມັດປົດສະຫຼຸບການເຄື່ອນໄຫວທຸລະກິດ ແລະ ງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ ແລະ ງົບກຳໄລຂາດທຶນສຳເລັດ) ປະຈຳໄຕມາດ 3 ປີ 2025 ທີ່ຜ່ານການຮັບຮອງຈາກຜູ້ບໍລິຫານ ເພື່ອເປີດເຜີຍສູ່ສາທາລະນະຜ່ານລະບົບເປີດເພີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ;
2. ອະນຸມັດກູ້ຢືມເງິນຈາກທະນາຄານ ພັດສະຫວັນ ຈຳກັດ;
3. ອະນຸມັດກູ້ຢືມເງິນຈາກທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ;
4. ອະນຸມັດແຜນດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງ ບໍລິສັດ ປະຈຳປີ 2026 ເພື່ອສະເໜີໃຫ້ຜູ້ຖືຮຸ້ນພິຈາລະນາຕໍ່ໄປ;
5. ອະນຸມັດຫຼັກເກນ ແລະ ແນວທາງການຊອກຫາສະມາຊິກສະພາບໍລິຫານຊຸດໃຫ່ມ ທົດແທນຊຸດເກົ່າທີ່ກຳລັງຈະໝົດວາລະລົງ;
6. ເຫັນດີຍົກເລີກຈ້າງ ບໍລິສັດ ພຣາວ ແອດໄວເຊີຣີ ຈຳກັດ ແລະ ແຕ່ງຕັ້ງ ບໍລິສັດ ອໍກຣາດ ອໍດິທ ແອນດ໌ ຄອນເຊົາທ໌ ຈຳກັດ ເປັນຜູ້ກວດສອບພາຍໃນຂອງບໍລິສັດ ປະຈຳປີ 2025;
7. ຮັບຊາບຜົນການດຳເນີນການຂອງ ບໍລິສັດ ສິ້ນສຸດເດືອນ ຕຸລາ 2025;

8. ຮັບຊາບສະຖານະການເງິນຂອງ ບໍລິສັດ ສິ້ນສຸດ 31 ຕຸລາ 2025 ແລະ ປະມານການ 3 ເດືອນຂ້າງໜ້າ;
9. ຮັບຊາບການຕິດຕາມຄວາມສ່ຽງ ຕາມແຜນບໍລິຫານຄວາມສ່ຽງ ປະຈຳໄຕມາດ 3 ປີ 2025.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ

(ທ່ານ ພາພັນ ຕຣິລິດວິໄລ)